ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຄຸ້ມຄອງຊັບສິນແຫ່ງລັດ

ເລກທີ 4439/ກຊລ

ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2025

## ໜັງສືແຈ້ງເຊີນປະມູນ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງຊັບສິນ ແຫ່ງລັດ ສະບັບເລກທີ 6199/ກງ, ລົງວັນທີ 16 ທັນວາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້ພາຫະນະເພື່ອປະກອບເປັນລົດຮັບໃຊ້ວຽກງານບໍລິຫານລວມຂອງບັນດາກະຊວງ ແລະ ອົງການທຽບເທົ່າ ຈຳນວນ 26 ຄັນໃນປີ 2025 ສະບັບເລກທີ 1620/ກງ, ລົງວັນທີ 30 ພຶດສະພາ 2025.

1. ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໄດ້ຮັບອະນຸມັດງົບປະມານ ເພື່ອຈັດຊື້ລົດປະກອບຮັບໃຊ້ວຽກງານບໍລິຫານລວມຂອງບັນດາກະຊວງ ແລະ ອົງການທຽບເທົ່າ, ປະເພດລົດຕູ້ 14 ບ່ອນນັ່ງ ຈຳນວນ 26 ຄັນ ໃນປີ 2025;
2. ຂໍເຊີນບັນດາບໍລິສັດທີ່ມີຄວາມເໝາະສົມ,ມີເງື່ອນໄຂຄົບຖ້ວນ ເຂົ້າຮ່ວມຍື່ນຊອງປະມູນແບບເປີດກ້ວາງ ສຳລັບການຈັດຊື້ພາຫະນະຈຳນວນ 26 ຄັນດັ່ງກ່າວ. ໂດຍກຳນົດໄລຍະເວລາ ມອບ-ຮັບລົດ ແມ່ນພາຍໃນເວລາ 4 ເດືອນ;
3. ການປະມູນດຳເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ບັນດາບໍລິສັດທີ່ມີຄຸນວຸດທິເໝາະສົມ ທີ່ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ທີ່ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ຊັ້ນ 3 (ຕຶກ E) ທີ່ຕັ້ງຢູ່: ບ້ານໂພນໄຊ, ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ, ເບີໂທ: 021 263252 ເລີ່ມຂາຍຊອງປະມູນ ແຕ່ວັນທີ 6 ມິຖຸນາ 2025 ຫາ ວັນທີ 25 ມິຖຸນາ 2025 ໃນໂມງເວລາທາງລັດຖະການ, ໃນລາຄາ 13 ລ້ານກີບຕໍ່ຊອງ;
5. ຊອງປະຊຸມຕ້ອງສົ່ງກ່ອນ 09:00ໂມງ, ຂອງວັນທີ 25 ມິຖຸນາ 2025 ທີ່ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ຊັ້ນ 3 (ຕຶກ E) ແລະ ຊອງຈະໄດ້ເປີດໃນເວລາ 09:00ໂມງ, ຂອງວັນທີ 25 ມິຖຸນາ 2025 ໂດຍຊ່ອງໜ້າຄະນະກຳມະການຈັດຊື້ ແລະ ບັນດາບໍລິສັດທີ່ເຂົ້າຮ່ວມການປະມູນ;
6. ທຸກຊອງປະມູນຕ້ອງປະກອບເອກະສານຕາມເງື່ອນໄຂທີ່ໄດ້ກຳນົດໃນຊຸດເອກະສານປະມູນຢ່າງຄົບຖ້ວນ.

ຮອງ ແທນ ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ

(ຕາງໜ້າຄະນະຮັບຜິດຊອບ)

ກະຊວງການເງິນ ... ກົມຄຸ້ມຄອງຊັບສິນແຫ່ງລັດ

ສົມບູນ ແກ່ນປະເສີດ

Somboun KENPASEUTH